ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສທຄ ຈັດຝຶກອົບຮົມພື້ນຖານບໍລິຫານການເງິນຈຸລະພາກ ຮຸ່ນທີ 3







ໃນໄລຍະວັນທີ 27-30 ກັນຍາ 2022 ທີ່ ສະຖາບັນການທະນາຄານ ໄດ້ຈັດຝຶກອົບຮົມກ່ຽວກັບ ພື້ນຖານການບໍລິຫານການເງິນຈຸລະພາກ ຮຸ່ນ 3, ໂດຍການເປັນປະທານຂອງ ທ່ານ ວິໄລຄຳ ປ້ອງພິມຄຳ ຮອງຫົວໜ້າສະຖາບັນການທະນາຄານ. ການຝຶກອົບຮົມໃນຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 18 ທ່ານ, ໃນນັ້ນ ປະກອບມີນັກສຳມະນາກອນທີ່ມາຈາກ ສກຈບ ສິນຊັບເມືອງເໜືອ (ສາຂາຫລວງພະບາງ), ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໂຮມຊັບພັດທະນາ (ແຂວງຫລວງນ້ຳທາ), ສກຈບ ຈະເລີນຊັບ, ສກຈບ ປະຕູຄຳ, ສກຈບ ອິນຊີ, ສກຈບ ນິວຄອນເຊັບ ແລະ ສກຈບ ນະຄອນຫລວງ.

ຈຸດປະສົງຂອງການຝຶກອົບຮົມໃນຄັ້ງນີ້ ແມ່ນເພື່ອແນໃສ່ (1) ການຜັນຂະຫຍາຍແຜນງານໂຄງການຂອງ ສທຄ ກໍຄືແຜນງານປະຈຳປີ 2022 ຂອງຂະແໜງການເງິນຈຸລະພາກ, (2) ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບການບໍລິຫານສະຖາບັນການເງິນຈຸລະພາກ ໃຫ້ເລິກເຊິ່ງ ແລະ ສາມາດໝູນໃຊ້ເຂົ້າໃນການດຳເນີນທຸລະກິດດັ່ງກ່າວໄດ້ດີຂຶ້ນ, (3) ເພື່ອສ້າງເຂັ້ມແຂງດ້ານວິຊາການ ແລະ ຜັນຂະຫຍາຍແນວທາງນະໂຍບາຍການຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ (Non Bank) ໃຫ້ດຳເນີນເປັນລະບົບ ເອກະພາບໄປໃນທິດທາງດຽວກັນ ແລະ ມີຜົນສຳເລັດເປັນກ້າວໆ ເປັນຕົ້ນ.





ໃນການຝຶກອົບຮົມໃນຄັ້ງນີ້ ນັກສຳມະນາກອນ ແມ່ນໄດ້ຮັບຟັງ, ລົງເລິກຄົ້ນຄວ້າ, ຖາມ-ຕອບ, ແລກປ່ຽນບົດຮຽນຮ່ວມກັນຕາມຂອບເຂດວາລະ, ເນື້ອໃນຂອງບົດຮຽນທີ່ກຳນົດໄວ້ ໂດຍສະເພາະກ່ຽວກັບບັນດາລະບຽບການຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ຫລັກການພື້ນຖານການເງິນຈຸລະພາກ, ການບໍລິຫານສິນເຊື່ອ ແລະ ເຕັກນິກການແກ້ໄຂໜີ້ເສຍ ແລະ ບັນຊີການເງິນຈຸລະພາກ ອີກດ້ວຍ.ນອກນັ້ນ, ທ່ານປະທານ ຍັງໄດ້ເນັ້ນໜັກໃຫ້ວິທະຍາກອນ ແລະ ຜູ້ເຂົ້າຮ່ວມການຝຶກອົບຮົມໃນຄັ້ງນີ້ ຈົ່ງຍົກສູງຄວາມເອົາໃຈໃສ່ໃນການແລກປ່ຽນຄວາມຮູ້, ຍາດແຍ່ງຖ່າຍທອດ-ຖອດຖອນເອົາບົດຮຽນປະສົບການທີ່ສຳຄັນ ທີ່ໄດ້ຈາກການຝຶກອົບຮົມຄັ້ງນີ້ໄປເປັນບ່ອນອີງອີກດ້ານໜຶ່ງ ເພື່ອສືບຕໍ່ເສີມຂະຫຍາຍເຂົ້າໃນການຄົ້ນຄວ້າ ແລະ ພັດທະນາຄວາມຮູ້ຄວາມສາມາດຂອງຕົນເອງ ສາມາດປະກອບສ່ວນພັດທະນາເສດຖະກິດປະຈຳທ້ອງຖິ່ນ ກໍຄືທຸລະກິດຂອງສະຖາບັນການເງິນຢ່າງມີຄຸນນະພາບ ແລະ ປະສິດທິຜົນສູງຂຶ້ນ.

# **ຂ່າວ-ພາບໂດຍ: ສີລິມຸງຄຸນ ຫລວງລາດ**
**ສະຖາບັນການທະນາຄານ**

ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ